ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
ແແແແແແແແແແແແແແແແແແແແແແແແແແແແແແແແແແແແແແແແແແແ

ກະຊວງ ກະສິກຳ ແລະ ປ່າໄມ້
ຫ້ອງການ

ເລກທີ 0227/ຫກ
ນະຄອນຫຼວງວຽງຈັນ, 03 FEB 2014

# ແຈ້ງການແນະນຳ

**ຮຽນ:** ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຂໍ້ກຳນົດເງື່ອນໄຂການສົ່ງອອກໃບຢາສູບແຫ້ງ (dried tobacco leaf, *Nicotiana tabacum*) ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມ ດຳລັດ ແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມ ປະກາດຂອງກົມວິຊາການກະເສດຂອງ ຣາຊະອານາຈັກໄທ ພສ 2556, ລົງວັນທີ 11/12/2013
- ອີງຕາມການສະເໜີຂອງກົມປູກຝັງສະບັບເລກທີ 0035/ກປຝ, ລົງວັນທີ 13/01/2014.

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ: ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກໃບຢາສູບແຫ້ງ ແລະ ຜູ້ດຳເນີນທຸລະກິດດ້ານສຸຂານາໄມພືດຫຼີກເວັ້ນຜົນກະທົບດ້ານລົບຕໍ່ສິນຄ້າກະສິກຳສົ່ງອອກ ຂອງ ສປປ ລາວ ໄປຕ່າງປະເທດ ພ້ອມທັງຮັບປະກັນການປະຕິບັດລະບຽບການດ້ານສຸຂານາໄມພືດສາກົນ ແລະ ປະເທດປາຍທາງນັ້ນ, ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ຈຶ່ງອອກແຈ້ງການ ດັ່ງນີ້:

ກ່ອນສົ່ງອອກ ໃບຢາສູບແຫ້ງ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ຜູ້ສົ່ງອອກຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. **ການຂໍອະນຸຍາດນຳເຂົ້າ**
   - ຕ້ອງມີໃບອະນຸຍາດນຳເຂົ້າ ເຊິ່ງອອກໃຫ້ໂດຍກົມວິຊາການກະເສດຂອງປະເທດໄທ.

2. **ວິທີການຂົນສົ່ງ**
   - ຕ້ອງສົ່ງຢາສູບມາຈາກພື້ນທີ່ໃດໜຶ່ງຂອງ ສປປ ລາວ ໄປຍັງຣາຊະອານາຈັກໄທໃນລັກສະນະເປັນສິນຄ້າຂົນສົ່ງທາງບົກ.

3. **ຂໍ້ກຳນົດເງື່ອນໄຂສຳລັບການນຳເຂົ້າ**
   - ຕ້ອງປາສະຈາກສັດຕູພືດກັກກັນຂອງຢາສູບ 2 ຊະນິດຄື: Ascochyta blight of cotton *(Ascochyta gossypii) ແລະ* Verticillium wilt of lucerne (*Verticillium albo-atrum);*

- ຕ້ອງປາສະຈາກແມງໄມ້ທີ່ມີຊີວິດ ຫຼື ສິ່ງທີ່ມີຊີວິດອື່ນທີ່ມີຄວາມສາມາດເປັນສັດຕູພືດກັກກັນຂອງ ຣາຊະອານາຈັກໄທ ແລະ ບໍ່ມີການປົນເປື້ອນຂອງດິນ, ຊາຍ ແລະ ຊິ້ນສ່ວນຂອງພືດອື່ນ ຫຼື ສິ່ງອື່ນ ໃດທີ່ມີຄວາມສາມາດນໍາພາສັດຕູພືດກັກກັນໄດ້;
- ຕ້ອງມັດ ຫຼື ບັນຈຸຫີບຫໍ່ຢາສູບໃນພາສະນະບັນຈຸທີ່ໃໝ່ ແລະ ສະອາດ;
- ຕ້ອງທໍາຄວາມສະອາດລົດບັນທຸກໃຫ້ປາສະຈາກດິນ, ຊາຍ ແລະ ສ່ວນຂອງພືດອື່ນ ຫຼື ສິ່ງອື່ນໃດທີ່ ສາມາດນໍາພາສັດຕູພືດກັກກັນໄດ້ ກ່ອນດໍາເນີນການຂົນຍ້າຍຢາສູບຂຶ້ນພາຫະນະຂົນສົ່ງ ນອກຈາກນີ້, ຕ້ອງປົກຄຸມລົດບັນທຸກໃຫ້ດີເພື່ອໃຫ້ໝັ້ນໃຈວ່າສາມາດປ້ອງກັນບໍ່ໃຫ້ຢາສູບຕົກເຮ່ຍໃນເວລາຂົນສົ່ງ;
- ຕ້ອງມີໜັງສືຮັບຮອງຈາກໜ່ວຍງານທີ່ກ່ຽວຂ້ອງ ຫຼື ເອກະຊົນວ່າໃບຢາສູບແຫ້ງທີ່ນໍາເຂົ້າບໍ່ແມ່ນພືດ ທີ່ໄດ້ຮັບການຕັດແຕ່ງທາງພັນທຸກໍາ.

## 4. ການຢັ້ງຢືນສຸຂານາໄມພືດ

- ຕ້ອງມີໃບຢັ້ງຢືນສຸຂານາໄມພືດຕົ້ນສະບັບເຊິ່ງອອກໃຫ້ໂດຍເຈົ້າໜ້າທີ່ທີ່ໄດ້ຮັບການແຕ່ງຕັ້ງຈາກ ອົງການຄຸ້ມຄອງວຽກງານປ້ອງກັນພືດ (ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້) ຕິດໄປພ້ອມກັບ ຊຸດສິນຄ້າໃນທຸກໆຄັ້ງທີ່ສົ່ງສິນຄ້າໄປປະເທດໄທ;
- ໃບຢັ້ງຢືນສຸຂານາໄມພືດຕ້ອງລະບຸຂໍ້ຄວາມເພີ່ມຕື່ມດັ່ງລຸ່ມນີ້:

"The consignment of dried tobacco leaves was inspected and found free from *Ascochyta gossypii and Verticillium albo-atrum*"

## 5. ການກວດກາການນໍາເຂົ້າຂອງໄທ

- ເມື່ອຢາສູບມາເຖິງດ່ານນໍາເຂົ້າຂອງຣາຊະອານາຈັກໄທແລ້ວ ການກວດກາຢາສູບຈະດໍາເນີນຫຼັງຈາກ ໄດ້ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານທັງໝົດທີ່ຄັດຕິດມາກັບສິນຄ້າ;
- ພະນັກງານກັກກັນພືດຈະສຸ່ມຕົວຢ່າງຢາສູບ ແລະ ກວດສອບສັດຕູພືດ ຖ້າພົບສັດຕູພືດທີ່ມີຊີວິດຈະ ສົ່ງຕົວຢ່າງສັດຕູພືດໄປຍັງຫ້ອງວິໄຈເພື່ອຈໍາແນກຊະນິດ ແລະ ຕ້ອງກັກຢາສູບໄວ້ຈົນກວ່າຈະຮູ້ຜົນ ຈາກຫ້ອງວິໄຈ;
- ໃນກໍລະນີກວດພົບສັດຕູພືດກັກກັນທັງ 2 ຊະນິດນັ້ນ ຫຼື ພົບສິ່ງອື່ນທີ່ສາມາດເປັນສັດຕູພືດກັກກັນ ຂອງຣາຊະອານາຈັກໄທ ຢາສູບທັງໝົດຕ້ອງຖືກກໍາຈັດສັດຕູພືດດ້ວຍວິທີທີ່ເໝາະສົມ (ຖ້າມີວິທີການ ກໍາຈັດ) ຫຼືສົ່ງກັບຫຼືທໍາລາຍໂດຍຜູ້ປະກອບການຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ;
- ກົມວິຊາການກະເສດຂອງຣາຊະອານາຈັກໄທມີສິດໂຈະການນໍາເຂົ້າຢາສູບຈາກ ສປປ ລາວ ເປັນການ ຊົ່ວຄາວຈົນກວ່າການປະເມີນຄວາມສ່ຽງສັດຕູພືດທີ່ກວດພົບນັ້ນຈະດໍາເນີນການສໍາເລັດ.

## 6. ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມ

ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ມີດ່ານປ້ອງກັນພືດຊາຍແດນທີ່ຕິດກັບ ປະເທດໄທ ຕ້ອງເຜີຍແຜ່ຂໍ້ມູນຂ່າວສານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຮັບຊາບເປັນຕົ້ນ ຜູ້ຜະລິດ, ຜູ້ປະກອບການ ແລະ ເຈົ້າໜ້າທີ່ຂະແໜງການຕ່າງໆ ປະຈໍາດ່ານຊາຍແດນ ເຂົ້າ-ອອກ ກ່ຽວກັບສັດຕູພືດຕິດແປດກັບຢາສູບ ທີ່ເປັນເປົ້າໝາຍກວດກາ, ເງື່ອນໄຂການອະນຸຍາດນໍາ ເຂົ້າຂອງປະເທດປາຍທາງ, ຂັ້ນຕອນການອະນຸຍາດ ນໍາເຂົ້າ-ສົ່ງອອກ ແລະ ການແຈ້ງເອກະສານຢູ່ດ່ານ